# ບົດຂ່າວ

## ສປປ ລາວ ໄດ້ຮັບທຶນສຸກເສີນຂອງອົງການສະຫະປະຊາຊາດ ເພື່ອຊ່ວຍເຫຼືອຜູ້ປະສົບໄພນໍ້າຖ້ວມ ຢູ່ແຂວງຄໍາມ່ວນ

**ນະຄອນຫຼວງວຽງຈັນ, 26 ພະຈິກ 2018 -** ສປປ ລາວ ປະສົບຜົນສໍາເລັດໃນການຮັບທຶນຈາກກອງທຶນຕອບໂຕ້ສຸກເສີນສູນກາງຂອງສະຫະປະຊາຊາດ ເພື່ອສະໜັບສະໜູນການຕອບໂຕ້ສຸກເສີນ ແລະ ການຟື້ນຟູເບື້ອງຕົ້ນ ຫຼັງຈາກໄພນໍ້າຖ້ວມ ທີ່ເກີດຂຶ້ນໃນທົ່ວປະເທດ. ທຶນຊ່ວຍເຫຼືອຈໍານວນ 3.5 ລ້ານໂດລາສະຫະລັດນັ້ນ ຈະຖືກນໍາໃຊ້ເຂົ້າໃນການຊ່ວຍເຫຼືອ 6 ເມືອງເປົ້າໝາຍທີ່ຖືກຜົນກະທົບໜັກທີ່ສຸດໃນແຂວງຄໍາມ່ວນ (ເມືອງໜອງບົກ, ຫີນບູນ, ບົວລະພາ, ມະຫາໄຊ, ເຊບັ້ງໄຟ ແລະ ຍົມມະລາດ).

ການຈັດຕັ້ງປະຕິບັດແຜນໃຫ້ການຊ່ວຍເຫຼືອດັ່ງກ່າວ ຈະໄດ້ຮັບການດໍາເນີນການພາຍໃຕ້ການນໍາພາຂອງຫຼາຍກະຊວງ ແລະອົງການຕ່າງໆ ໂດຍສະເພາະແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງກະສິກໍາ ແລະ ຫ້ອງການຂັ້ນແຂວງ ແລະ ເມືອງຂອງກະຊວງດັ່ງກ່າວ ຢູ່ແຂວງຄໍາມ່ວນ ແລະ 6 ເມືອງເປົ້າໝາຍ. ເຄືອຂ່າຍອົງການສະຫະປະຊາຊາດ 4 ອົງການ ເຊິ່ງປະກອບມີ ອົງການອາຫານໂລກ, ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ, ອົງການອະນາໄມໂລກ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ຈະໃຫ້ການສະໜັບສະໜຸນໃນການຈັດຕັ້ງປະຕິບັດແຜນງານດັ່ງກ່າວ.

ທຶນຊ່ວຍເຫຼືອລ້າດັ່ງກ່າວ ຈະຖືກນໍາໃຊ້ເຂົ້າໃນການຟື້ນຟູການທໍາມາຫາກິນຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໂດຍການຟື້ນຟູແຫຼ່ງລາຍຮັບຂອງພວກເຂົາກ່ອນໜ້ານີ້ ແລະ  ການຮັບປະກັນການເພິ່ງຕົນເອງໄດ້ຂອງພວກເຂົາ. ການສະໜອງອາຫານ ແລະ ການສຶກສາ ເປັນເປົ້າໝາຍສໍາຮອງ.

ໂພສະນາການ, ຄວາມໝັ້ນຄົງດ້ານສະບຽງອາຫານ, ສຸຂະພາບ ແລະ ການທໍາມາຫາກິນ ເປັນສິ່ງທີ່ໜ້າເປັນຫ່ວງຕົ້ນຕໍສໍາລັບປະຊາຊົນ 136,565 ຄົນໃນ 302 ບ້ານເປົ້າໝາຍການຊ່ວຍເຫຼືອ. ໂດສະເພາະໃນແຂວງຄໍາມ່ວນ, ທົ່ງນາ 26,590 ຮຕ, ສວນເຂົ້າໂພດ 203 ຮຕ, ສວນມັນຕົ້ນ 21 ຮຕ ແລະ ສວນຜັກ 240 ຮຕ ໄດ້ຖືກທໍາລາຍຈາກໄພນໍ້າຖ້ວມຢ່າງສິ້ນເຊີງ. ນີ້ໄດ້ກໍ່ໃຫ້ເກີດບັນຫາຮ້າຍແຮງສໍາລັບຊຸມຊົນທີ່ອາໄສການຜະລິດກະສິກໍາ ເພື່ອເປັນອາຫານ ແລະ ເປັນແຫຼ່ງລາຍຮັບ. ການຂາດຄວາມຫຼາກຫຼາຍທາງດ້ານອາຫານ ສົ່ງຜົນໃຫ້ເກີດການຂາດວິຕະມິນ ອາດຈະເປັນສາເຫດເຮັດໃຫ້ເກີດການລະບາດຂອງພະຍາດຂາດວິຕະມິນບີ 1 ໃນແຂວງດັ່ງກ່າວໃນປະຈຸບັນ.

ບັນດາເຄືອຂ່າຍອົງການສະຫະປະຊາຊາດ ໂດຍການຮ່ວມມືກັບລັດຖະບານ ຈະຈັດຕັ້ງປະຕິບັດການໃຫ້ຄວາມຊ່ວຍເຫຼືອບັນເທົາທຸກຕ່າງໆ. ອົງການອາຫານໂລກຈະສຸມໃສ່ການປັບປຸງໂພສະນາການໂດຍຜ່ານການສະໜອງເງິນສົດໃຫ້ແກ່ປະຊາຊົນ ເພື່ອໃຫ້ພວກເຂົາເຈົ້າມີອິດສະລະໃນການເລືອກຊື້ສິນຄ້າໃນຕະຫຼາດທີ່ມີຢູ່. ອົງການອະນາໄມໂລກ ຈະໃຫ້ການສະໜັບສະໜຸນໃນດ້ານການຮັກສາສຸຂະພາບຂັ້ນສຸກເສີນ ແລະ ການກວດກາຄຸນນະພາບແຫຼ່ງນໍ້າ ເພື່ອປ້ອງກັນການລະບາດຂອງພະຍາດຕິດຕໍ່ເພີ່ມຕື່ມ. ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ ຈະສະໜອງແນວພັນເຄື່ອງປູກຂອງຝັງ ເພື່ອໃຫ້ພວກເຂົາເຈົ້າເລີ່ມການປູກໄດ້ໃນຊ່ວງລະດູໜາວ ແລະ ການສັກຢາກັນພະຍາດ ໃຫ້ແກ່ສັດທີ່ລອດຈາກໄພພິບັດ. ອົງການສະຫະປະຊາຊາດ ເພື່ອການ

ພັດທະນາ ໂດຍການຮ່ວມມືກັບ ຄະນະກຳມະທິການແຫ່ງຊາດວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກຄ້າງຢູ່ ສປປ ລາວ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ, ຈະຮັບຜິດຊອບການຈັດການກັບຊາກປະລັກຫັກພັງ ເພື່ອໃຫ້ປະຊາຊົນສາມາດທຳການຜະລິດ ກະສິກຳດ້ວຍຊົນລະປະທານ ແລະ ການສະໜອງການບໍລິການຂອງພາກລັດ. ນອກຈາກນີ້, ອົງການສະຫະປະຊາຊາດ ເພື່ອການ ພັດທະນາ ຍັງຈະໃຫ້ການສຶກສາແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ ກ່ຽວກັບຄວາມສ່ຽງຂອງລະເບີດບໍ່ທັນແຕກພາຍຫຼັງເກີດໄພນ້ຳ ຖ້ວມ.

ເງິນຊ່ວຍເຫຼືອລ້າທີ່ໄດ້ຮັບຈາກກອງທຶນສຸກເສີນສູນກາງຂອງສະຫະປະຊາຊາດດັ່ງກ່າວ ເປັນພຽງສ່ວນເລັກນ້ອຍຂອງທຶນທີ່ຈຳເປັນ ສຳລັບການຈັດຕັ້ງປະຕິບັດແຜນຕອບໂຕ້ໄພພິບັດຂອງທີມງານຊ່ວຍເຫຼືອດ້ານມະນຸດສະທຳແຫ່ງ ສປປ ລາວ. ທີມງານໄດ້ຕັ້ງ ງົບປະມານທີ່ຕ້ອງການສຳລັບໃຫ້ການສະໜັບສະໜູນລັດຖະບານສຳລັບການຕອບໂຕ້ໄພນ້ຳຖ້ວມໃນທົ່ວປະເທດ ແມ່ນຢູ່ທີ່ ປະມານ 42.7 ລ້ານໂດລາສະຫະລັດ ເຊິ່ງຄວາມຕ້ອງການດ້ານງົບປະມານທັງໝົດສຳລັບການຟື້ນຟູ ແລະ  ການຕອບໂຕ້ແມ່ນສູງ ກວ່າຈຳນວນນັ້ນ. ມາຮອດປະຈຸບັນນີ້, ທຶນທີ່ລະດົມໄດ້ສຳລັບການຈັດຕັ້ງປະຕິບັດແຜນຕອບໂຕ້ໄພພິບັດແມ່ນ 6.7 ລ້ານໂດລາ ສະຫະລັດ ແລະ ສ່ວນທີ່ຂາດແມ່ນປະມານ 36 ລ້ານໂດລາສະຫະລັດ.

ກອງທຶນຕອບໂຕ້ສຸກເສີນສູນກາງຂອງສະຫະປະຊາຊາດ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2005 ໂດຍສະມັດຊາໃຫຍ່ແຫ່ງ ສະຫະປະຊາຊາດ ເພື່ອເປັນກອງທຶນສາກົນສະໜອງການຊ່ວຍເຫຼືອທັນທີ ແລະ ຖືກກຸ່ມເປົ້າໝາຍ ທີ່ເປັນຜູ້ຖືກເຄາະຮ້າຍຈາກ ໄພພິບັດທາງທຳມະຊາດ ແລະ ຂໍ້ຂັດແຍ້ງທີ່ໃຊ້ກຳລັງອາວຸດ. ກອງທຶນນີ້ມີຄວາມຊຳນານດ້ານການສະໜອງທຶນສຳລັບກໍລະນີສຸກ ເສີນ ແລະ ການປ້ອງກັນບັນຫາທີ່ເກີດຂຶ້ນລະຫວ່າງປະຕິບັດການຊ່ວຍເຫຼືອບັນເທົາທຸກ. ກອງທຶນນີ້ແມ່ນໄດ້ຮັບທຶນຈາກບັນດາ ສະມາຊິກຂອງອົງການສະຫະປະຊາຊາດ ໃນທົ່ວໂລກ ພ້ອມກັນກັບອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ.

ການຊ່ວຍເຫຼືອຂ້າງເທິງນັ້ນແມ່ນມີທ່າແຮງທີ່ຈະຂະຫຍາຍການຊ່ວຍເຫຼືອໄປສູ່ເຂດອື່ນໆທີ່ໄດ້ຮັບຜົນກະທົບຈາກໄພພິບັດໃນ ສປປ ລາວ. ນີ້ຈະເປັນສິ່ງໜຶ່ງທີ່ຈະຊ່ວຍໃຫ້ປະຊາຊົນໃນ ສປປ ລາວ ທີ່ໄດ້ຮັບຜົນກະທົບທີ່ສຸດຈາກໄພພິບັດສາມາດຟື້ນຟູຊີວິດ ຄືນອີກຄັ້ງ ໃນຂະນະທີ່ທົ່ວປະເທດຈະຍັງຄົງສືບຕໍ່ດຳເນີນການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນຂະນະ ດຽວກັນກໍ່ຮັບປະກັນການພັດທະນາໃຫ້ມີຄວາມກວມລວມ ແລະ ເທົ່າທຽມ ຕາມເນື້ອໃນຈິດໃຈຂອງເປົ້າໝາຍການພັດທະນາ ແບບຍືນຍົງເປັນຫຼັກ.